**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 2565 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 23 ຕຸລາ 2025

# ຄໍາແນະນໍາ
## ກ່ຽວກັບການຄໍ້າປະກັນ, ການຖອນວົງເງິນຄໍ້າປະກັນ ແລະ ພັນທະຂອງ ຜູ້ດໍາເນີນກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ

- ອີງຕາມ ດໍາລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ສະບັບເລກທີ 0666/ອຄ, ລົງວັນທີ 22 ເມສາ 2025;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0723/ກຄພນ, ລົງວັນທີ 01 ກໍລະກົດ 2025.

ເພື່ອຜັນຂະຫຍາຍເນື້ອໃນບາງມາດຕາຂອງຂໍ້ຕົກລົງ ວ່າດ້ວຍກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ສະບັບເລກທີ 0666/ອຄ, ລົງວັນທີ 22 ເມສາ 2025 ໃຫ້ເປັນອັນລະອຽດ, ຈະແຈ້ງ, ຊັດເຈນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ ພ້ອມທັງເປັນການແນະນໍາເພີ່ມເຕີມ ກ່ຽວກັບການຄໍ້າປະກັນ, ການຖອນວົງເງິນຄໍ້າປະກັນ, ການເກັບຮັກສາ ແລະ ການລາຍງານຂໍ້ມູນ ກ່ຽວກັບການດໍາເນີນກິດຈະການບໍລິການຊື້-ຂາຍຄໍາຜ່ານທາງເອເລັກໂຕຣນິກ ເພື່ອເປັນການສົ່ງເສີມວຽກງານດັ່ງກ່າວ ໃຫ້ມີການຂະຫຍາຍຕົວ, ແຂ່ງຂັນທີ່ເປັນທໍາ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ດໍາເນີນກິດຈະການ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

## ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາແນະນໍາ:

### I.ແນະນໍາເພີ່ມເຕີມບາງເນື້ອໃນ

### 1. ໝວດ 3 ການຄໍ້າປະກັນ ແລະ ການຖອນວົງເງິນຄໍ້າປະກັນ

### 1.1 ມາດຕາ 11 ການຄໍ້າປະກັນ

ການຝາກເງິນຄໍ້າປະກັນ ໜຶ່ງຮ້ອຍຕື້ກີບ ຂອງຜູ້ດໍາເນີນກິດຈະການ ເພື່ອຂໍອະນຸຍາດດໍາເນີນກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ຕ້ອງຝາກເງິນຄໍ້າປະກັນ ຢູ່ກັບທະນາຄານທຸລະກິດໃດໜຶ່ງທີ່ມີເງື່ອນໄຂ ແລະ ຄວາມພ້ອມໃນການຮັບຝາກ ພ້ອມທັງອອກໜັງສືຢັ້ງຢືນບັນຊີເປັນລາຍລັກອັກສອນ ໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອເປັນບ່ອນອີງໃນການຄົ້ນຄວ້າອອກໃບອະນຸຍາດດໍາເນີນກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ດັ່ງນີ້:

1. ບັນຊີສະເພາະ ແມ່ນບັນຊີເງິນຝາກຂອງທະນາຄານທຸລະກິດ ສ້າງຂຶ້ນເພື່ອເປັນເງື່ອນໄຂ ແລະ ຮອງຮັບການຝາກເງິນຄໍ້າປະກັນຂອງຜູ້ດໍາເນີນກິດຈະການ ເພື່ອຂໍອະນຸຍາດດໍາເນີນກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ບັນຊີເງິນສະເພາະນີ້ ເອີ້ນວ່າ ບັນຊີເງິນຝາກກະແສລາຍວັນ.

2. ການເປີດບັນຊີເງິນຝາກກະແສລາຍວັນ ທຸກຄັ້ງຕ້ອງໄດ້ສ້າງສັນຍາ ສອງຝ່າຍ ລະຫວ່າງ ທະນາຄານທຸລະກິດ ທີ່ເປີດບັນຊີເງິນຝາກ ແລະ ຜູ້ດໍາເນີນກິດຈະການ ຊຶ່ງສັນຍາດັ່ງກ່າວ ຕ້ອງກໍານົດເງື່ອນໄຂ, ຂອບເຂດຂອງສັນຍາຢ່າງຊັດເຈນ, ລະບຸວັດຖຸປະສົງຂອງເງິນຄໍ້າປະກັນ, ໄລຍະເວລາຄືນເງິນຄໍ້າປະກັນ, ການບັນທຶກ ແລະ ການແຈ້ງເຕືອນ, ການຕິດຕາມ, ກວດກາ ແລະ ກວດສອບສະຖານະຂອງບັນຊີເງິນຝາກກະແສລາຍວັນ ລວມທັງການກໍານົດອັດຕາດອກເບ້ຍ, ການນໍາໃຊ້ເງິນຄໍ້າປະກັນ, ການຖອນເງິນຄໍ້າປະກັນ ແລະ ອື່ນໆ;

3. ພາຍຫຼັງຜູ້ດໍາເນີນກິດຈະການເປີດບັນຊີ ເພື່ອຄໍ້າປະກັນ ແລະ ນໍາເອົາເງິນ ໜຶ່ງຮ້ອຍຕື້ ຝາກໃນບັນຊີເງິນຝາກກະແສລາຍວັນ, ທະນາຄານທຸລະກິດທີ່ຮັບຝາກເງິນຄໍ້າ ຕ້ອງອອກໜັງສືຢັ້ງຢືນບັນຊີ ແລະ ວົງເງິນຄໍ້າປະກັນ ເປັນທາງການໃຫ້ຜູ້ດໍາເນີນກິດຈະການ ເພື່ອເປັນຫຼັກຖານ ແລະ ບ່ອນອີງປະກອບເຂົ້າໃນການສະເໜີຂໍໃບອະນຸຍາດດໍາເນີນກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ຕາມຂັ້ນຕອນທີ່ກໍານົດໄວ້ໃນຂໍ້ຕົກລົງ ວ່າດ້ວຍກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ;

4. ການເກັບຮັກສາເງິນຄໍ້າປະກັນ ຕ້ອງເກັບໄວ້ໃນບັນຊີເງິນຝາກກະແສລາຍວັນ ຂອງທະນາຄານທຸລະກິດທີ່ເປີດບັນຊີເງິນຝາກ ແລະ ອອກຊື່ຫົວໜ່ວຍທຸລະກິດ ໃນວົງເງິນຄໍ້າປະກັນຕໍ່າສຸດ ໜຶ່ງຮ້ອຍຕື້ກີບ ຕາມລະບຽບການຊຶ່ງບໍ່ສາມາດຖອນ, ໂອນ ຫຼື ໃຊ້ຄໍ້າປະກັນ ໃຫ້ແກ່ທຸລະກໍາອື່ນໄດ້, ເວັ້ນເສຍຜູ້ດໍາເນີນກິດຈະການປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງ ວ່າດ້ວຍກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ແລະ ຂໍ້ 1.2 ຂອງຄໍາແນະນໍາສະບັບນີ້;

5. ໄລຍະເວລາຄືນເງິນຝາກຄໍ້າປະກັນ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນສັນຍາ ສອງຝ່າຍ, ຊຶ່ງຜູ້ດໍາເນີນກິດຈະການ ຕ້ອງເພີ່ມວົງເງິນຄໍ້າປະກັນ ຖ້າເຫັນວ່າທຸລະກໍາຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ມີການສະສົມຄໍາເທື່ອລະໜ້ອຍຂອງລູກຄ້າ ຊຶ່ງມີມູນຄ່າເຖິງ 90% ຂອງວົງເງິນຄໍ້າປະກັນ, ຜູ້ດໍາເນີນກິດຈະການ ຕ້ອງວິເຄາະຄວາມຕ້ອງການຂອງການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ໄລຍະ ຫົກເດືອນຕໍ່ໜ້າ ແລ້ວລາຍງານກົມການຄ້າພາຍໃນ ເພື່ອຄົ້ນຄວ້າ ແລະ ອອກໜັງສືທາງການເຖິງທະນາຄານທຸລະກິດ ທີ່ເປີດບັນຊີເງິນຝາກ ເພື່ອດັດແກ້ສັນຍາ ແລະ ເພີ່ມວົງເງິນຄໍ້າປະກັນຕື່ມ ໃຫ້ແທດເໝາະກັບສະພາບການຕົວຈິງ ແລະ ປ້ອງກັນຄວາມສ່ຽງທີ່ອາດເກີດຂຶ້ນ;

ກໍລະນີ ຜູ້ດໍາເນີນກິດຈະການ ບໍ່ເພີ່ມວົງເງິນຄໍ້າປະກັນ ຊຶ່ງມີມູນຄ່າເຖິງ 95% ຂອງວົງເງິນຄໍ້າປະກັນເບື້ອງຕົ້ນ, ກົມການຄ້າພາຍໃນ ຕ້ອງອອກໜັງສືແຈ້ງໂຈະການດໍາເນີນກິດຈະການ ໂດຍຜ່ານແພູດຟອມດັ່ງກ່າວຊົ່ວຄາວ;

6. ບັນຊີເງິນຝາກກະແສລາຍວັນ ຕ້ອງມີການບັນທຶກຢ່າງເປັນລະບົບ ແລະ ແຈ້ງເຕືອນ ເມື່ອໃກ້ຮອດກໍານົດມູນຄ່າສະສົມເຖິງ 90% ຂອງວົງເງິນຄໍ້າປະກັນ ເພື່ອໃຫ້ຜູ້ດໍາເນີນກິດຈະການ ເພີ່ມວົງເງິນຄໍ້າປະກັນ ແລະ ຕ້ອງປະເມີນສະພາບການເຄື່ອນໄຫວບັນຊີຊື້-ຂາຍຄໍາຂອງລູກຄ້າ ແລະ ສະພາບການເຄື່ອນໄຫວອື່ນຂອງຜູ້ດໍາເນີນກິດຈະການ ທຸກ ຫົກເດືອນ ເພື່ອລາຍງານກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຮັບຊາບ ແລະ ພິຈາລະນາ;

7. ກົມການຄ້າພາຍໃນ ຮ່ວມກັບທະນາຄານທຸລະກິດທີ່ຮັບຝາກເງິນຄໍ້າປະກັນ ຕິດຕາມ, ກວດກາ ແລະ ກວດສອບສະຖານະຂອງບັນຊີເງິນຝາກກະແສລາຍວັນ ຂອງຜູ້ດໍາເນີນກິດຈະການ ເປັນປົກກະຕິ ປະຈໍາ ເດືອນ, ໄຕມາດ, ປີ ຫຼື ກໍລະນີ ຮີບດ່ວນ ກໍ່ສາມາດກວດສອບໄດ້ທັນທີ ແລະ ກັບທີ່.

8. ການກໍານົດ ແລະ ຖອນອັດຕາດອກເບ້ຍຂອງວົງເງິນຄໍ້າປະກັນ ໃນບັນຊີເງິນຝາກກະແສລາຍວັນ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນສັນຍາ ສາມ ຝ່າຍ;

9. ບັນຊີເງິນຝາກກະແສລາຍວັນ ສາມາດປິດໄດ້ ຊຶ່ງຕ້ອງປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງ ວ່າດ້ວຍກິດຈະການບໍລິການຊື້-ຂາຍຄໍາ ຜ່ານທາງເອເລັກໂຕຣນິກ ແລະ ຂໍ້ 1.2 ຂອງຄໍາແນະນໍາສະບັບນີ້;

10. ທະນາຄານທຸລະກິດທີ່ຮັບຝາກເງິນຄໍ້າປະກັນ ສາມາດນໍາໃຊ້ວົງເງິນຄໍ້າປະກັນ ເຂົ້າໃນການປ່ອຍສິນເຊື່ອຕາມລະບຽບການຂອງທະນາຄານ;

ສຳລັບການນຳໃຊ້ວົງເງິນຄ້ຳປະກັນ ທະນາຄານຕ້ອງມີຫຼັກຖານການບັນທຶກ, ຈຸດປະສົງການນຳໃຊ້ເງິນ, ໄລຍະເວ ລາຄືນເງິນ ແລະ ການລາຍງານ ໃຫ້ທັງກົມການຄ້າພາຍໃນ ເຫັນດີກ່ອນ ພາຍໃນ ສິບວັນ ລັດຖະການ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້ ພ້ອມທັງແຈ້ງໃຫ້ຜູ້ດຳເນີນທຸລະກິດຜູ້ດຳເນີນກິດຈະການທີ່ເປັນເຈົ້າຂອງເງິນຮັບຊາບ.

**1.2 ມາດຕາ 12 ການຖອນວົງເງິນຄ້ຳປະກັນ**

ການຖອນວົງເງິນຄ້ຳປະກັນ ຕ້ອງປະຕິບັດ ດັ່ງນີ້:

1. ກໍລະນີ ຄື: ① ມີການສະເໜີຍົກເລີກການກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ, ② ປະສົບບັນຫາການສົ່ງມອບຄຳໃຫ້ລູກຄ້າ ແລະ ③ ຜູ້ດຳເນີນກິດຈະການຖືກສານຕັດສິນໃຫ້ລົ້ມລະລາຍ, ທັງສາມ ກໍລະນີ ຕ້ອງດຳເນີນການແກ້ໄຂການສົ່ງມອບເງິນຄືນໃຫ້ລູກຄ້າທີ່ຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ, ກົມການຄ້າພາຍໃນ ຕ້ອງຮີບຮ້ອນສະເໜີຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບດຳເນີນການແກ້ໄຂບັນຫາ ເປັນຕົ້ນ ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ກົມຄຸ້ມຄອງທະນາຄານທຸລະກິດ ຂອງທະນາຄານແຫ່ງ ສປປ ລາວ, ກົມເຕັກໂນໂລຊີດີຈິຕອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

2. ກໍລະນີ ມີການກະທຳຜິດລະເມີດ ຫຼື ລະເມີດສັນຍາ ທັງສອງຝ່າຍ ລະຫວ່າງ ທະນາຄານທຸລະກິດ ແລະ ຜູ້ດຳເນີນກິດຈະການ ໃຫ້ປະຕິບັດ ແລະ ແກ້ໄຂສັນຍາ ຕາມລະບຽບການ ຫຼື ອາດຕ້ອງຊົດໃຊ້ຄ່າເສຍຫາຍທີ່ເກີດຂຶ້ນຈາກການກະທຳຜິດ ຫຼື ລະເມີດສັນຍາ;

3. ການສະເໜີຂໍຖອນວົງເງິນຄ້ຳປະກັນຂອງຜູ້ດຳເນີນກິດຈະການ ສາມາດສະເໜີຂໍຖອນໄດ້ເມື່ອຄົບກຳນົດ ຫຼື ສັນຍາສິ້ນສຸດ ໂດຍຕ້ອງບໍ່ປະສົບບັນຫາການສົ່ງມອບຄຳໃຫ້ລູກຄ້າ ຫຼື ຖືກສານຕັດສິນໃຫ້ລົ້ມລະລາຍ ທະນາຄານທີ່ເປີດບັນຊີເງິນຝາກ ຕ້ອງຄືນເງິນຄ້ຳປະກັນເຕັມຈຳນວນ ແລະ ເອກະສານຮັບຮອງການມອບສົ່ງ ຫຼື ຖອນວົງເງິນຄ້ຳປະກັນ.

❖ **ເອກະສານປະກອບ ເພື່ອຂໍຖອນວົງເງິນຄ້ຳປະກັນ ມີດັ່ງນີ້:**

**ກ. ກໍລະນີຜູ້ດຳເນີນກິດຈະການຂໍຢຸດເຊົາດ້ວຍຄວາມສະໝັກໃຈ**

ຜູ້ດຳເນີນກິດຈະການຂໍຢຸດເຊົາດ້ວຍຄວາມສະໝັກໃຈ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍຢຸດເຊົາກິດຈະການດ້ວຍຄວາມສະໝັກໃຈ;

2. ບົດລາຍງານສະພາບການເຄື່ອນໄຫວກິດຈະການ ຕາມແບບພິມຂອງກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;

3. ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະແກ້ໄຂສົ່ງມອບຄຳໃຫ້ບັນດາລູກຄ້າຄົບຖ້ວນ;

4. ບົດບັນທຶກບັນຊີຊຳລະສົ່ງມອບຄຳໃຫ້ລູກຄ້າ;

5. ໜັງສືສະເໜີຂໍຖອນວົງເງິນຄ້ຳປະກັນຂອງຜູ້ດຳເນີນກິດຈະການ ຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;

6. ໜັງສືສະເໜີຂໍຖອນເງິນຄ້ຳປະກັນ ຈາກກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຫາທະນາຄານທຸລະກິດ;

7. ຜູ້ດຳເນີນກິດຈະການ ສາມາດສະເໜີຂໍຖອນວົງເງິນຄ້ຳປະກັນຕື່ມ ຈາກວົງເງິນຄ້ຳປະກັນທີ່ຄ້ຳໃນເບື້ອງຕົ້ນ ໜຶ່ງຮ້ອຍຕື້ກີບ ເມື່ອເຫັນວ່າຍອດບັນຊີມີມູນຄ່າການຊື້ຄຳສະສົມຂອງລູກຄ້າຫຼຸດລົງ ຕ່ຳກວ່າວົງເງິນຄ້ຳປະກັນໃນເບື້ອງຕົ້ນ ຫຼື ຕ່ຳກວ່າ 90% ຂອງ ໜຶ່ງຮ້ອຍຕື້ກີບ ຕ້ອງປະກອບເອກະສານ ດັ່ງນີ້:

   1) ໜັງສືສະເໜີ ຍື່ນຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ .
   2) ບົດລາຍງານສະພາບການເຄື່ອນໄຫວກິດຈະການ ຕາມແບບພິມຂອງກົມການຄ້າພາຍໃນ;
   3) ໜັງສືຢັ້ງຢືນບັນຊີມູນຄ່າຊື້-ຂາຍຄຳຕົວຈິງ ຈາກຜູ້ດຳເນີນກິດຈະການ ແລະ ໜັງສືຢັ້ງຢືນວົງເງິນຄ້ຳປະກັນ ຈາກທະນາຄານທຸລະກິດ.

**ຂ. ການແກ້ໄຂ ກໍລະນີ ຜູ້ດຳເນີນກິດຈະການລົ້ມລະລາຍ**

ກໍລະນີ ຜູ້ດຳເນີນກິດຈະການລົ້ມລະລາຍ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືຢັ້ງຢືນ ຫຼື ຄຳຕັດສິນໃຫ້ລົ້ມລະລາຍຈາກສານປະຊາຊົນສູງສຸດ;
2. ຂໍ້ຕົກລົງ ວ່າດ້ວຍແຕ່ງຕັ້ງຄະນະແກ້ໄຂສົ່ງມອບຄຳໃຫ້ບັນດາລູກຄ້າໃຫ້ຄົບຖ້ວນ;
3. ບົດບັນທຶກບັນຊີການຊຳລະສົ່ງມອບຄຳ ຫຼື ສົ່ງເງິນຄືນໃຫ້ລູກຄ້າ;
4. ໜັງສືສະເໜີຂໍຖອນເງິນຄ້ຳປະກັນ ຂອງຜູ້ດຳເນີນກິດຈະການ ຍື່ນຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;
5. ໜັງສືສະເໜີຂໍຖອນເງິນຄ້ຳປະກັນ ຈາກກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຫາທະນາຄານທຸລະກິດ.

## 2. ໝວດທີ 4 ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

### 2.1 ມາດຕາ 14 ພັນທະຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

1. ຕ້ອງສ້າງສັນຍາ ແລະ ເປີດບັນຊີຜູກກັບທະນາຄານທຸລະກິດ ຢ່າງຕ່ຳ ສອງ ທະນາຄານຂຶ້ນໄປ ທີ່ເປັນເງິນກີບ ເພື່ອອຳນວຍຄວາມສະດວກໃຫ້ລູກຄ້າເຮັດທຸລະກຳການຊຳລະຜ່ານການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແລະ ບັນຊີດັ່ງກ່າວ ຕ້ອງເປັນບັນຊີອອກຊື່ບໍລິສັດ;
2. ການເກັບຮັກສາຂໍ້ມູນການເຄື່ອນໄຫວດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ຮັກສາຂໍ້ມູນຜ່ານເຊີບເວີ ຢ່າງໜ້ອຍ ສອງບ່ອນ ຂອງຜູ້ດຳເນີນກິດຈະການທີ່ກ່ຽວຂ້ອງ ແຕ່ຕ້ອງໄດ້ມີການເກັບຮັກສາຂໍ້ມູນດັ່ງກ່າວ ນຳກົມເຕັກໂນໂລຊີດິຈິຕອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕາມລະບຽບການ ແລະ ຕ້ອງມີການອັບເດດການເກັບຮັກສາຂໍ້ມູນເປັນປະຈຳ;
3. ຕ້ອງມີລະບົບແຈ້ງເຕືອນໃຫ້ກົມການຄ້າພາຍໃນ ແລະ ຜູ້ດຳເນີນກິດຈະການ ໃນການເພີ່ມວົງເງິນຄ້ຳປະກັນຕື່ມ ເພື່ອສືບຕໍ່ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ເມື່ອເຫັນວ່າມູນຄ່າວົງເງິນຄ້ຳປະກັນໃກ້ຮອດ 95% ຂອງຈຳນວນວົງເງິນທີ່ຄ້ຳປະກັນໄວ້ທັງໝົດ ຊຶ່ງການເພີ່ມວົງເງິນຄ້ຳປະກັນ ໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້;
4. ຕ້ອງແຈ້ງຕໍ່ກົມການຄ້າພາຍໃນ ທັນທີ ກໍລະນີ ການເຮັດທຸລະກຳຊື້-ຂາຍຄຳ ທີ່ມີມູນຄ່າ ໜຶ່ງຕື້ກີບຂຶ້ນໄປຕໍ່ຄັ້ງຕໍ່ບັນຊີ ແລະ ມີທຸລະກຳຊື້ຢ່າງຕໍ່ເນື່ອງ ຊຶ່ງເຫັນວ່າມີຄວາມສ່ຽງ ຫຼື ສົງໄສເຂົ້າຄ່າຍການຟອກເງິນ ເພື່ອຕິດຕາມ, ກວດກາ ແລະ ລາຍງານໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ, ສຳນັກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອຮັບຊາບ ແລະ ພິຈາລະນາ;
5. ຕ້ອງສະຫຼຸບລາຍງານຜົນການດຳເນີນກິດຈະການ ເປັນປະຈຳວັນ, ເດືອນ ແລະ ປີ ຜ່ານລະບົບ API ຂອງແພຼດຟອມຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ແກ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ກົມຄຸ້ມຄອງທະນາຄານທຸລະກິດ ຂອງທະນາຄານແຫ່ງ ສປປ ລາວ ຕາມຮ່າງລາຍງານເອກະພາບ ລະຫວ່າງ ຂະແໜງການ ໃຫ້ແກ່ຜູ້ດຳເນີນກິດຈະການ;
6. ຕ້ອງໄດ້ສ້າງກົນໄກການຕິດຕາມ, ກວດກາ ໂດຍກຳນົດຊ່ອງທາງ ແລະ ອຳນວຍຄວາມສະດວກໃຫ້ອົງການຄຸ້ມຄອງເຂົ້າເຖິງຂໍ້ມູນໃນລະບົບການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໄດ້ທັນທີ, ປະຈຳວັນ, ເດືອນ ແລະ ປີ ເປັນແຕ່ລະໄລຍະ ຊຶ່ງຊ່ອງທາງການຕິດຕາມ ກວດກາ ອະນຸຍາດໃຫ້ສະເພາະຄະນະກົມການຄ້າພາຍໃນ, ຄະນະກົມທີ່ກ່ຽວຂ້ອງ ຂອງທະນາຄານແຫ່ງ ສປປ ລາວ ສາມາດເຂົ້າເຖິງໄດ້.

### 2.2 ພັນທະເພີ່ມເຕີມຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

1. ການຮັກສາ ແລະ ຮັບປະກັນລະບົບການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕ້ອງມີຄວາມສະຖຽນ ຫຼື ເຮັດທຸລະກຳໃຫ້ໄດ້ເປັນປົກກະຕິ, ຖ້າມີການປັບປຸງ ຫຼື ມີການປິດລະບົບຊົ່ວຄາວ ໃນການແກ້ໄຂຕ້ອງສ້າງແຜນ ແລະ ສະເໜີຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມເຕັກໂນໂລຊີດິຈິຕອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອຄົ້ນຄວ້າ ແລະ ພິຈາລະນາປັບປຸງ, ແກ້ໄຂ ໃຫ້ທັນກັບເວລາທີ່ກຳນົດໄວ້;

2. ຕ້ອງຈັດແບ່ງບັນຊີຂອງລູກຄ້າ ອອກເປັນ 3 ລະດັບ ຄື :

1) ລະດັບນ້ອຍ ທີ່ມີທຸລະກຳຊື້-ຂາຍຄຳ ເທື່ອລະໜ້ອຍ ແລະ ມີມູນຄ່າຊື້ບໍ່ເກີນ ສາມຮ້ອຍລ້ານກີບ;

2) ລະດັບກາງ ມີທຸລະກຳຊື້-ຂາຍຄຳ ເທື່ອລະໜ້ອຍ ແລະ ມີມູນຄ່າຊື້ບໍ່ເກີນ ລະຫວ່າງ ສາມຮ້ອຍລ້ານ ໜຶ່ງກີບ ຫາ ໜຶ່ງຕື້ກີບ;

3) ລະດັບໃຫຍ່ ເກີນ ໜຶ່ງຕື້ກີບຂຶ້ນໄປ.

3. ສ້າງຊ່ອງທາງ, ຂັ້ນຕອນ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງທຸລະກຳຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແບບອອນລາຍໃນແອັບພລິເຄເຊິນ ຫຼື ເວັບໄຊຂອງຕົນ ເພື່ອອຳນວຍຄວາມສະດວກ ແລະ ແກ້ໄຂຂໍ້ຂັດແຍ່ງເບື້ອງຕົ້ນ ຊຶ່ງຕ້ອງແກ້ໄຂ ແລະ ໄກ່ເກ່ຍແບບປະນີປະນອມ ລະຫວ່າງ ຜູ້ສະໜອງ ແລະ ຜູ້ຊົມໃຊ້ ຫຼື ຜູ້ສະໜອງດ້ວຍກັນເອງ ທັງນີ້ກໍ່ເປັນການຊ່ວຍຫຼຸດຜ່ອນການຍື່ນຄຳຮ້ອງທຸກ ແລະ ແກ້ໄຂຂໍ້ຂັດແຍ່ງຜ່ານທຸລະກຳຈາກພາກລັດ.

## III. ວິທີການຈັດຕັ້ງປະຕິບັດ

1. ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບທະນາຄານແຫ່ງ ສປປ ລາວ, ທະນາຄານທຸລະກິດ ແລະ ຜູ້ດຳເນີນກິດຈະການ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

2. ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

3. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ຈັນສະແຫວງ ບຸນຍົງ